ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ພະແນກຂໍ້ມູນຂ່າວສານ ແລະ ປະຊາສຳພັນ ຫ້ອງການ ທຫລ
ໂທ/ແຟກ (856-21) 213109, 213110

## ພິທີວາງພວງມາລາ ເພື່ອສະແດງຄວາມເສົ້າສະຫຼົດໃຈຕໍ່ກັບການສູນເສຍອະດີດການນຳຂັ້ນສູງຂອງ ສສ.ຫວຽດນາມ



ໃນຕອນບ່າຍຂອງວັນທີ 24 ພຶດສະພາ 2025 ທີ່ສະຖານທູດ ສສ.ຫວຽດນາມ ປະຈຳ ສປປ ລາວ. ທະນາຄານແຫ່ງ ສປປ ລາວ (ທຫລ) ນຳພາໂດຍ ທ່ານ ສຸລິສັກ ທຳນຸວົງ, ຮອງຜູ້ວ່າການ ທຫລ ພ້ອມດ້ວຍຄະນະ ໄດ້ ວາງພວງມາລາ ເພື່ອສະແດງຄວາມເສົ້າສະຫຼົດໃຈແດ່ ທ່ານ ເຈີນດຶກເລືອງ, ອະດີດກຳມະການກົມການເມືອງສູນກາງ ພັກ, ອະດີດປະທານປະເທດແຫ່ງ ສສ. ຫວຽດນາມ ທີ່ໄດ້ເຖິງແກ່ມໍລະນະກຳ ໃນວັນທີ 20 ພຶດສະພາ 2025.






ການຈາກໄປຂອງ ທ່ານ ເຈີນດຶກເລືອງ ເປັນການສູນເສຍ ອາດີດການນຳ ທີ່ແສນເຄົາລົບຮັກຂອງ ພັກ, ລັດ ແລະ ປະຊາຊົນບັນດາເຜົ່າຂອງຊາວຫວຽດນາມ.

ໃນເວລາແຫ່ງຄວາມໂສກເສົ້າເສຍດາຍນີ້, ຄະນະພັກ-ຄະນະນຳ ພ້ອມດ້ວຍບັນດາພະນັກ ງານຂອງ ຂະແໜງທະນາຄານ ໃນ ສປປ ລາວ ຂໍສະແດງຄວາມໄຫວ້ອາໄລອາວອນ ແລະ ຂໍແບ່ງເບົາຄວາມທຸກໂສກ ຕໍ່ການສູນເສຍອະດີດການນຳຂອງ ສສ.ຫວຽດນາມ ໃນຄັ້ງນີ້ດ້ວຍ.

**ຂ່າວ-ພາບ: ຫ້ອງການ ທະນາຄານແຫ່ງ ສປປ ລາວ**

## ຢູ່ເມືອງລາວໃຊ້ເງິນກີບລາວ